ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ

ກົມຄຸ້ມຄອງທະນາຄານທຸລະກິດ

ເລກທີ 585 /ກຄທ

ນະຄອນຫຼວງວຽງຈັນ, ວັນທີ 21 ຕຸລາ 2019

# ແຈ້ງການແນະນຳ

## ການຈັດຕັ້ງປະຕິບັດແຈ້ງການເລກທີ 172/ທຫລ, ລົງວັນທີ 15 ພຶດສະພາ 2017

- ອີງຕາມຂໍ້ຕົກລົງ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກົມຄຸ້ມຄອງທະນາຄານທຸລະກິດ ສະບັບເລກທີ 955/ທຫລ, ລົງວັນທີ 07 ພະຈິກ 2013;
- ອີງຕາມແຈ້ງການ ເລກທີ 172/ທຫລ, ລົງວັນທີ 15 ພຶດສະພາ 2017 ກ່ຽວກັບການປະຕິບັດຕໍ່ເງິນກູ້ທີ່ຕິດພັນກັບໂຄງການກໍ່ສ້າງພື້ນຖານໂຄງລ່າງຂອງລັດຖະບານ;
- ອີງຕາມທິດຊີ້ນຳຂອງທ່ານຜູ້ວ່າການທະນາຄານແຫ່ງ ສປປ ລາວ ຄັ້ງວັນທີ 27 ກັນຍາ 2019.

ກົມຄຸ້ມຄອງທະນາຄານທຸລະກິດ, ທະນາຄານແຫ່ງ ສປປ ລາວ ອອກແຈ້ງການແນະນຳ ດັ່ງນີ້:

1. ການປະຕິບັດຕໍ່ເງິນກູ້ໃຫ້ແກ່ໂຄງການກໍ່ສ້າງພື້ນຖານໂຄງລ່າງຂອງລັດຖະບານທີ່ຖືກຮັບຮອງຈາກສະພາແຫ່ງຊາດ ຕາມທີ່ກຳນົດໄວ້ໃນແຈ້ງການເລກທີ 172/ທຫລ, ລົງວັນທີ 15 ພຶດສະພາ 2017 ແມ່ນລວມທັງໂຄງການທີ່ໄດ້ຖືກຮັບຮອງເອົາໂດຍສະພາປະຊາຊົນຂັ້ນແຂວງ ຕາມພາລະບົດບາດຂອງສະພາປະຊາຊົນຂັ້ນແຂວງ ທີ່ກຳນົດໄວ້ໃນກົດໝາຍທີ່ກ່ຽວຂ້ອງ.
2. ທະນາຄານ ຕ້ອງເອົາໃຈໃສ່ປະຕິບັດຕໍ່ເງິນກູ້ໃຫ້ແກ່ໂຄງການກໍ່ສ້າງພື້ນຖານໂຄງລ່າງຂອງລັດຖະບານທີ່ຖືກຮັບຮອງເອົາໂດຍສະພາປະຊາຊົນຂັ້ນແຂວງ ໃຫ້ສອດຄ່ອງກັບແຈ້ງການເລກທີ172/ທຫລ, ລົງວັນທີ 15 ພຶດສະພາ 2017 ແລະ ບົດແນະນຳການຈັດຕັ້ງປະຕິບັດ ສະບັບເລກທີ 970/ກຄທ, ລົງວັນທີ 07 ພະຈິກ 2017.

ດັ່ງນັ້ນ, ຈຶ່ງອອກແຈ້ງການແນະນຳສະບັບນີ້ ເພື່ອເປັນບ່ອນອີງໃນການຈັດຕັ້ງປະຕິບັດ.

ຮັບແທນ ຫົວໜ້າກົມ

ທະນາຄານແຫ່ງ ສປປ ລາວ
ກົມຄຸ້ມຄອງທະນາຄານທຸລະກິດ

ໄພທີຈັນ ທຳມະເທວາ